**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມໃຫຍ່ພະລາທິການ

ກົມຄຸ້ມຄອງຊັບສິນ-ທີ່ດິນ

ເລກທີ 400/ກຊສ

ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2025.

# ໜັງສືແຈ້ງເຊີນປະມູນ

1. ກົມຄຸ້ມຄອງຊັບສິນ-ທີ່ດິນ ກົມໃຫຍ່ພະລາທິການ ປ້ອງກັນຄວາມສະຫງົບ ໄດ້ຮັບອະນຸມັດງົບປະມານ ຈາກລັດຖະບານ ປະຈຳປີ 2025: ເພື່ອດຳເນີນການປະມູນ-ຈັດຊື້ເຄື່ອງຄົງທີ່ (ເຟີນິເຈີ) ຂອງກະຊວງປ້ອງກັນຄວາມສະຫງົບ.

2. ຂໍເຊີນບັນດາຫ້າງຮ້ານ, ບໍລິສັດ, ໂຮງງານເຟີນິເຈີ ເຂົ້າຮ່ວມຍື່ນຊອງປະມູນແບບເປີດກ້ວາງສຳລັດການ ປະມູນ-ຈັດຊື້ ເຄື່ອງຄົງທີ່ (ເຟີນິເຈີ) ຂອງກະຊວງປ້ອງກັນຄວາມສະຫງົບ ປະຈຳປີ 2025. ກຳນົດໄລຍະສົ່ງສິນຄ້າ ແມ່ນ 30 ວັນ.

3. ການປະມູນດຳເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງ ລາຄາຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

4. ບໍລິສັດ, ຫ້າງຮ້ານ ແລະ ໂຮງງານເຟີນິເຈີ ທີ່ມີຄຸນທີເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ທີ່ຫ້ອງການ ກົມຄຸ້ມຄອງຊັບສິນ-ທີ່ດິນ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ, ທີ່ຕັ້ງຢູ່: ບ້ານພະໂພ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ເບີໂທ: 021 970455; 020 55377736, ເລີ່ມຂາຍຊອງແຕ່ວັນທີ 16 ພຶດສະພາ 2025 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

5. ຊອງປະຊຸມຕ້ອງສົ່ງກ່ອນ 13:30 ໂມງ, ຂອງວັນທີ 19 ມິຖຸນາ 2025 ທີ່ຫ້ອງການກົມຄຸ້ມຄອງຊັບສິນ-ທີ່ດິນ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ແລະ ຊອງຈະໄດ້ເປີດໃນເວລາ 14:00 ໂມງ, ຂອງວັນທີ 19 ມິຖຸນາ 2025 ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນທີ່ຫ້ອງປະຊຸມຊັ້ນ IV ອາຄານຫຼັງໃໝ່ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ.

6. ທຸກໆຊອງປະມູນ ຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ, ແຊັກເງິນສົດ ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ບໍ່ໃຫ້ຫຼຸດ 2% ຂອງມູນຄ່າປະມູນມາພ້ອມ.

**ຫົວໜ້າກົມ**

**ບຸນເພັງ ນາທະວົງ**